ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ
ກອງສະໜາມບິນລາວ

ເລກທີ 5817 /ກສລ
ນະຄອນຫລວງວຽງຈັນ, ວັນທີ 01 ຕຸລາ 2025

# ຫນັງສືແຈ້ງເຊີນປະມູນ

1. ກອງສະໜາມບິນລາວ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸທິເຫມາະສົມ ເຂົ້າຍື່ນຊອງປະມູນ ວຽກ ສໍາຫຼວດ-ອອກແບບລະອຽດ ເພື່ອປັບປຸງສະໜາມບິນຫຼວງນໍ້າທາ, ໄລຍະການປະຕິບັດແມ່ນ 90 ວັນ.
2. ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດຫມາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
3. ການປະມູນນີ້ ອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸທິເຫມາະສົມ, ມີໃບອະນຸຍາດດໍາເນີນທຸລະກິດຖືກຕ້ອງຕາມກົດຫມາຍ ທີ່ກ່ຽວພັນກັບ ບໍລິສັດ ສໍາຫຼວດ-ອອກແບບ;
4. ບໍລິສັດທີ່ມີຄຸນນະວຸທິເຫມາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ກອງສະໜາມບິນລາວ, ຜູ້ຮັບຜິດຊອບ: ທ່ານ ສອນມະນີ ໄພສະຫັວດ ໂທລະສັບ: 020 22219363 ແລະ ທ່ານ ນາງ ດາລີນ້າ ພົມມະຈັກ ໂທລະສັບ: 020 55002931 ໃນເວລາລັດຖະການ.
5. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ຕ້ອງຍື່ນຫນັງສືສະເຫນີຫາ ທີ່ຢູ່ຂ້າງລຸ່ມນີ້, ເລີ່ມແຕ່ 07 ຕຸລາ 2025 ເປັນຕົ້ນໄປ, ໃນລາຄາ 3,000,000 ກີບ. ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ.
6. ຊອງປະມູນຕ້ອງສົ່ງຕາມທີ່ຢູ່ລຸ່ມນີ້, ໃນເວລາ ຫລື ກ່ອນເວລາ 09:00 ໂມງ ຂອງວັນທີ 12 ພະຈິກ 2025 ທີ່ຫ້ອງປະຊຸມເບີ 02 ກອງສະໜາມບິນລາວ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 09:10 ນາທີ ຂອງວັນດຽວກັນ , ໂດຍຊ້ອງຫນ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນໍາ.
7. ທຸກໆ ຊອງປະມູນຕ້ອງໄດ້ ມີຫນັງສືຄໍ້າປະກັນການປະມູນເປັນເງິນສົດ ຫລື ແຊັກ (ວີຊ້າ) ບໍ່ໃຫ້ຫລຸດ 2% ຂອງລາຄາສະເຫນີເຂົ້າປະມູນ.
8. ທີ່ຢູ່: ກອງສະໜາມບິນລາວ, ໂທລະສັບ: 021 520542, ສໍານັກງານຕັ້ງຢູ່: ສະໜາມບິນສາກົນວັດໄຕ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ.

ເຊັນແທນ ຫົວໜ້າກອງ
ຮອງຫົວໜ້າກອງ

ກະຊວງໂຍທາທິການ ແລະ ຂົນສົ່ງ
ກອງສະໜາມບິນລາວ

ສັກດາ ສຸຣິສັກ